**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການເງິນ

ເລກທີ 1554 /ກງ

ນະຄອນຫຼວງວຽງຈັນ, ວັນທີ 23 ພຶດສະພາ 2025

# ຂໍ້ຕົກລົງ

## ວ່າດ້ວຍ ການປະເມີນຜົນການດຳເນີນທຸລະກິດ ຂອງ ວິສາຫະກິດລັດລົງທຶນ

- ອີງຕາມ ກົດໝາຍ ວ່າດ້ວຍ ວິສາຫະກິດ ສະບັບເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ດຳລັດ ວ່າດ້ວຍ ວິສາຫະກິດລັດລົງທຶນ ສະບັບເລກທີ 322/ລບ, ລົງວັນທີ 02 ກັນຍາ 2022;
- ອີງຕາມ ດຳລັດ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງການເງິນ ສະບັບເລກທີ 353/ນຍ, ລົງວັນທີ 02 ສິງຫາ 2024;
- ອີງຕາມ ໜັງສືສະເໜີ ຂອງ ກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ການປະກັນໄພ ສະບັບເລກທີ 00391-01/ຄລປ, ລົງວັນທີ 20 ມີນາ 2025.

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ມີຈຸດປະສົງເພື່ອຜັນຂະຫຍາຍດຳລັດວ່າດ້ວຍວິສາຫະກິດລັດລົງທຶນ ແລະ ເປັນເຄື່ອງມືໃນການປະເມີນຜົນການດຳເນີນທຸລະກິດ ຂອງ ວິສາຫະກິດລັດລົງທຶນ; ແນໃສ່ຊຸກຍູ້ການດຳເນີນທຸລະກິດ ຂອງ ວິສາຫະກິດລັດລົງທຶນ ມີປະສິດທິພາບ ແລະ ປະສິດທິຜົນສູງ ສາມາດບັນລຸເປົ້າໝາຍສູງສຸດ, ຮັບປະກັນການເຄື່ອນໄຫວທຸລະກິດໃຫ້ໄປຕາມລະບົບ ແລະ ກົນໄກການດຳເນີນທຸລະກິດດ້ວຍຄວາມໂປ່ງໃສ, ສາມາດກວດສອບໄດ້, ມີຄວາມຮັບຜິດຊອບ, ສ້າງຜົນກຳໄລ ແລະ ກາຍເປັນຫົວໜ່ວຍນຳໜ້າພາທາງ ໃຫ້ສາມາດປະກອບສ່ວນເປັນເສົາຄ້ຳໃນການພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ.

### ມາດຕາ 2 ການປະເມີນຜົນການດຳເນີນທຸລະກິດ ຂອງ ວິສາຫະກິດລັດລົງທຶນ

ການປະເມີນຜົນການດຳເນີນທຸລະກິດ ແມ່ນການວິເຄາະ-ວິໄຈ, ຕິດຕາມ, ຕີລາຄາປະສິດທິຜົນການເຄື່ອນໄຫວທຸລະກິດ ໃຫ້ແທດເໝາະກັບສະພາບການໃນແຕ່ລະປີ ເພື່ອເປັນພື້ນຖານໃຫ້ແກ່ການກຳນົດທິດທາງແກ້ໄຂບັນດາຂໍ້ຄົງຄ້າງ ແລະ ຂໍ້ຫຍຸ້ງຍາກ ໃນການເຄື່ອນໄຫວທຸລະກິດ ຂອງ ວິສາຫະກິດລັດລົງທຶນ. ນອກຈາກນີ້ ການປະເມີນຜົນຍັງຈະຊ່ວຍໃຫ້ວິສາຫະກິດລັດລົງທຶນ ສາມາດເປີດເຜີຍບັນດາຂໍ້ມູນຢ່າງໂປ່ງໃສ ແລະ ຍົກສູງຄວາມຮັບຜິດຊອບ ຂອງ ວິສາຫະກິດລັດລົງທຶນ ໃນການປະຕິບັດລະບຽບກົດໝາຍ.

**ມາດຕາ 3 ວິທີການປະເມີນ**

ການປະເມີນຜົນການດຳເນີນທຸລະກິດ ຂອງ ວິສາຫະກິດລັດລົງທຶນ ປະກອບມີ ການປະເມີນຜົນດ້ານການເງິນ ແລະ ການປະເມີນຜົນທີ່ບໍ່ແມ່ນການເງິນ ເຊິ່ງນໍາໃຊ້ບັນດາຕົວຊີ້ວັດຕ່າງໆ ເພື່ອໃຫ້ຄະແນນ ແລະ ຈັດປະເພດວິສາຫະກິດລັດລົງທຶນ, ໂດຍຈັດແບ່ງອອກເປັນ 04 ປະເພດ ຕາມຄະແນນທີ່ໄດ້ຮັບ ຄືດັ່ງນີ້:

1) ປະເພດ 1 = ດີຫຼາຍ
2) ປະເພດ 2 = ດີ
3) ປະເພດ 3 = ປານກາງ
4) ປະເພດ 4 = ອ່ອນ

**1. ການປະເມີນຜົນດ້ານການເງິນ**

ການປະເມີນຜົນດ້ານການເງິນ ແມ່ນການວິເຄາະ-ວິໄຈ ຕີລາຄາສະພາບການເງິນ, ຕີລາຄາປະສິດທິຜົນການເຄື່ອນໄຫວທຸລະກິດ ແນໃສ່ຜັນຂະຫຍາຍຈຸດດີ, ຊອກຫາສາເຫດ ແລະ ບັນຫາທີ່ເກີດຂຶ້ນດ້ານການເງິນ ເພື່ອແຈ້ງເຕືອນ, ສະກັດກັ້ນບັນດາຄວາມສ່ຽງດ້ານການເງິນ ທີ່ອາດຈະເກີດຂຶ້ນກັບວິສາຫະກິດລັດລົງທຶນ. ການປະເມີນຜົນດ້ານການເງິນ ແບ່ງອອກເປັນ 5 ກຸ່ມ ຄື:

+ **ກຸ່ມທີ1 ການລະດົມທຶນ ແລະ ການຮັກສາທຶນ** ປະກອບມີຕົວຊີ້ວັດ ດັ່ງນີ້:

- ອັດຕາສ່ວນໜີ້ຕ້ອງສົ່ງ;
- ອັດຕາສ່ວນ ທຶນຂອງລັດ (ຈໍານວນການປະກອບທຶນຂອງລັດຕົວຈິງ);
- ດັດສະນີການຮັກສາທຶນ.

+ **ກຸ່ມທີ 2 ການຄຸ້ມຄອງ ແລະ ນໍາໃຊ້ທຶນ** ປະກອບມີຕົວຊີ້ວັດ ດັ່ງນີ້:

- ອັດຕາສ່ວນລົງທຶນເຂົ້າໃນຊັບສິນໝູນວຽນ;
- ອັດຕາສ່ວນລົງທຶນເຂົ້າໃນຊັບສິນບໍ່ໝູນວຽນ;
- ປະສິດທິຜົນການລົງທຶນໃນແຕ່ລະໂຄງການ;
- ປະສິດທິຜົນການນໍາໃຊ້ທຶນ;
- ອັດຕາສ່ວນຜົນຕອບແທນຕໍ່ຊັບສິນ;
- ອັດຕາສ່ວນຜົນຕອບແທນຕໍ່ທຶນຂອງລັດ;
- ອັດຕາສ່ວນລາຍຈ່າຍ;
- ອັດຕາສ່ວນຜົນຕອບແທນການດໍາເນີນງານ;
- ອັດຕາສ່ວນຜົນຕອບແທນຈາກການຂາຍສິນຄ້າ ແລະ ການສະໜອງບໍລິການ;
- ການປະກອບສ່ວນເຂົ້າງົບປະມານແຫ່ງລັດທີ່ໄດ້ນໍາໃຊ້ທຶນ;
- ອັດຕາສ່ວນກໍາໄລທີ່ຮັກສາໄວ້ (ກໍາໄລທີ່ຍັງບໍ່ໄດ້ແບ່ງປັນ);
- ກໍາໄລສຸດທິຕໍ່ລາຍຮັບ;
- ລາຍຈ່າຍຕໍ່ລາຍຮັບ.

+ **ກຸ່ມທີ 3 ການຊໍາລະໜີ້ ແລະ ຄວາມສ່ຽງດ້ານການເງິນ** ປະກອບມີຕົວຊີ້ວັດ ດັ່ງນີ້:

- ຄວາມສາມາດໃນການຊຳລະໜີ້;
- ອັດຕາສ່ວນຊັບສິນໝູນວຽນຕໍ່ໜີ້ສິນໝູນວຽນ;
- ອັດຕາສ່ວນຊັບສິນບໍ່ໝູນວຽນຕໍ່ໜີ້ສິນໝູນວຽນ.
- ອັດຕາສ່ວນໜີ້ຕໍ່ຊັບສິນ;
- ອັດຕາສ່ວນໜີ້ຕໍ່ທຶນ.

**+ ກຸ່ມທີ 4 ການຂະຫຍາຍຕົວຂອງທຸລະກິດ** ປະກອບມີຕົວຊີ້ວັດ ດັ່ງນີ້:

- ອັດຕາການຂະຫຍາຍຕົວດ້ານລາຍຮັບ;
- ອັດຕາການຂະຫຍາຍຕົວດ້ານລາຍຈ່າຍ;
- ອັດຕາການຂະຫຍາຍຕົວດ້ານກຳໄລ;
- ອັດຕາການຂະຫຍາຍຕົວດ້ານທຶນ.

**+ ກຸ່ມທີ 5 ການຫັກຄັງສຳຮອງ ແລະ ການປະຕິບັດພັນທະ** ປະກອບມີຕົວຊີ້ວັດ ດັ່ງນີ້:

- ການຫັກຄັງສຳຮອງຕາມລະບຽບການ;
- ການຫັກຄັງສຳຮອງອື່ນໆ;
- ອາກອນລາຍໄດ້ ທີ່ມອບໃຫ້ລັດ;
- ອາກອນ ແລະ ພາສີຄ້າງມອບໃຫ້ລັດ;
- ອາກອນ ແລະ ພາສີທີ່ຍົກເວັ້ນ;
- ຄ່າທຳນຽມ ແລະ ຄ່າພາກຫຼວງທີ່ມອບໃຫ້ລັດ;
- ເງິນປັນຜົນທີ່ມອບໃຫ້ລັດ;
- ຍອດໜີ້ຕ້ອງສົ່ງຄ້າງຊຳລະ;
- ຍອດເງິນການຄ້ຳປະກັນ ທີ່ລັດຖະບານໃຫ້ການກູ້ຢືມ;
- ການຊຳລະເງິນກູ້ຄືນໃຫ້ລັດ.

## 2. ການປະເມີນຜົນທີ່ບໍ່ແມ່ນການເງິນ

ການປະເມີນຜົນທີ່ບໍ່ແມ່ນການເງິນ ແມ່ນການຕິດຕາມການປະຕິບັດລະບຽບກົດໝາຍ, ການປະຕິບັດເປົ້າໝາຍຍຸດທະສາດທາງດ້ານການເມືອງ ແລະ ການປະຕິບັດເປົ້າໝາຍຍຸດທະສາດທາງດ້ານເສດຖະກິດ-ສັງຄົມ ທີ່ລັດໄດ້ມອບໝາຍໃຫ້, ເຊິ່ງປະກອບມີ ດັ່ງນີ້:

- ການຂະຫຍາຍຖານລູກຄ້າ (ເພີ່ມຂຶ້ນ/ຫຼຸດລົງ);
- ການປະຕິບັດລະບຽບກົດໝາຍ, ໂດຍບໍ່ຖືກຟ້ອງຮ້ອງ ແລະ ໜັງສືຕັກເຕືອນຈາກພາກລັດ;
- ການຄ້າງມອບພັນທະອາກອນ;
- ການຄ້າງມອບເງິນປັນຜົນໃຫ້ລັດ;
- ການມອບໝາຍໃຫ້ຜະລິດສິນຄ້າ ແລະ ການບໍລິການ (ສະເພາະຂະແໜງສາທາລະນະປະໂຫຍດ);
- ການເຂົ້າເຖິງຂອງສັງຄົມໃນການສະໜອງສິນຄ້າ ແລະ ການບໍລິການ (ສະເພາະຂະແໜງສາທາລະນະປະໂຫຍດ).

**ມາດຕາ 4 ຂັ້ນຕອນການປະເມີນ**

1. ວິສາຫະກິດລັດລົງທຶນ ຕ້ອງສ້າງແຜນທຸລະກິດໄລຍະກາງ-ຍາວ (ແຜນ 3-5 ປີ) ແລະ ແຜນທຸລະກິດໄລຍະສັ້ນ (ແຜນປະຈໍາປີ) ແລ້ວນໍາສົ່ງໃຫ້ ກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ການປະກັນໄພ ພາຍໃນວັນທີ 31 ມີນາ ຂອງທຸກປີ.
2. ພາຍຫຼັງສິ້ນສຸດປີບັນຊີ, ວິສາຫະກິດລັດລົງທຶນ ຕ້ອງເປັນເຈົ້າການສະໜອງຂໍ້ມູນຂອງຕົນ ໂດຍການຕື່ມຂໍ້ມູນລົງໃນລະບົບຄຸ້ມຄອງວິສາຫະກິດລັດລົງທຶນ ຂອງ ກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ການປະກັນໄພ ໃຫ້ສໍາເລັດພາຍໃນວັນທີ 30 ເມສາ ຂອງທຸກປີ, ພ້ອມທັງ ສົ່ງປຶ້ມສະຫຼຸບບັນຊີທີ່ໄດ້ຜ່ານການກວດກາໄລ່ລຽງອາກອນ ແລະ ໄດ້ຜ່ານການກວດສອບຈາກອົງການກວດສອບແຫ່ງລັດ ຫຼື ບໍລິສັດກວດສອບເອກະລາດ ໃຫ້ກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ການປະກັນໄພ.
3. ກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ການປະກັນໄພ ສາມາດແຈ້ງໃຫ້ວິສາຫະກິດລັດລົງທຶນສະໜອງຂໍ້ມູນເພີ່ມເຕີມ ແລະ ວິສາຫະກິດລັດລົງທຶນ ຕ້ອງສະໜອງຂໍ້ມູນເພີ່ມເຕີມໃຫ້ ພາຍໃນ 15 ວັນ.
4. ກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ການປະກັນໄພ ເປັນເຈົ້າການຄົ້ນຄວ້າ ແລະ ປະເມີນຜົນດໍາເນີນທຸລະກິດ ຂອງ ວິສາຫະກິດລັດລົງທຶນ ໃຫ້ສໍາເລັດພາຍໃນວັນທີ 30 ມິຖຸນາ ຂອງທຸກປີ.
5. ກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ການປະກັນໄພ ສະຫຼຸບສັງລວມ ແລະ ລາຍງານຜົນການປະເມີນຜົນການດໍາເນີນທຸລະກິດ ຂອງ ວິສາຫະກິດລັດລົງທຶນ ໃຫ້ແກ່ ຄະນະນໍາກະຊວງການເງິນ ເພື່ອຮັບຮອງ, ພ້ອມທັງ ແຈ້ງຜົນການຈັດປະເພດ ລົງໃນລະບົບຄຸ້ມຄອງວິສາຫະກິດລັດລົງທຶນ ເພື່ອໃຫ້ບັນດາວິສາຫະກິດລັດລົງທຶນ ແລະ ສັງຄົມ ໄດ້ຮັບຊາບ ພາຍໃນວັນທີ 30 ກໍລະກົດ ຂອງທຸກປີ.

**ມາດຕາ 5 ການນໍາໃຊ້ຜົນການຈັດປະເພດວິສາຫະກິດລັດລົງທຶນ**

ຜົນການຈັດປະເພດວິສາຫະກິດລັດລົງທຶນ ຈະຖືກນໍາໃຊ້ ດັ່ງນີ້:

❖ **ສໍາລັບ ລັດວິສາຫະກິດ:**

**ປະເພດ 1:** ຈະໄດ້ຮັບການຍ້ອງຍໍ ແລະ ສາມາດຈ່າຍເງິນບໍາເນັດປະຈໍາປີ (Bonus) ໃຫ້ຜູ້ບໍລິຫານ ແລະ ພະນັກງານ ໃນອັດຕາສ່ວນບໍ່ເກີນ 10% ຂອງກໍາໄລສຸດທິ, ໃນນັ້ນ ຖ້າບໍ່ເກີນ 5% ຂອງກໍາໄລສຸດທິ ແມ່ນ ມອບໃຫ້ສະພາບໍລິຫານຕົກລົງໄດ້ເລີຍ, ຖ້າເກີນ 5% ແມ່ນຕ້ອງໄດ້ຮັບການເຫັນດີຈາກກະຊວງການເງິນ.

**ປະເພດ 2:** ສາມາດຈ່າຍເງິນບໍາເນັດປະຈໍາປີ ໃຫ້ຜູ້ບໍລິຫານ ແລະ ພະນັກງານໄດ້ ບໍ່ເກີນ 5% ຂອງກໍາໄລສຸດທິ ບົນພື້ນຖານການຕົກລົງຂອງສະພາບໍລິຫານ ແລະ ຕ້ອງໄດ້ຮັບການເຫັນດີຈາກກະຊວງການເງິນ. ພ້ອມດຽວກັນນີ້ , ອາດມີການກໍານົດທິດທາງປັບປຸງແກ້ໄຂເພື່ອມອບໃຫ້ຜູ້ບໍລິຫານຝ່າຍລັດນໍາໄປຈັດຕັ້ງປະຕິບັດ ແລະ ອາດຈະມີການປັບປຸງຜູ້ບໍລິຫານຝ່າຍລັດຈໍານວນໜຶ່ງ ຕາມຄວາມເໝາະສົມ;

**ປະເພດ 3:** ບໍ່ອະນຸຍາດໃຫ້ຈ່າຍເງິນບໍາເນັດປະຈໍາປີ ໃຫ້ຜູ້ບໍລິຫານ ແລະ ພະນັກງານ. ພ້ອມນີ້ ກະຊວງການເງິນຈະປັບປຸງຜູ້ບໍລິຫານຝ່າຍລັດຈໍານວນໜຶ່ງ ທີ່ບໍລິຫານບໍ່ມີປະສິດທິຜົນ. ພ້ອມດຽວກັນນີ້, ກໍຈະມີການຄົ້ນຄວ້າກໍານົດທິດທາງການປັບປຸງແກ້ໄຂເພື່ອມອບໃຫ້ຜູ້ບໍລິຫານຝ່າຍລັດນໍາໄປຈັດຕັ້ງປະຕິບັດ.

**ປະເພດ 4:** ບໍ່ອະນຸຍາດໃຫ້ຈ່າຍເງິນບໍາເນັດປະຈໍາປີ ໃຫ້ຜູ້ບໍລິຫານ ແລະ ພະນັກງານ. ກໍລະນີ ຖືກຈັດໃນປະເພດ 4 ສາມປີຕິດຕໍ່ກັນ ກະຊວງການເງິນ ຈະຄົ້ນຄວ້າທິດທາງການຫັນໄປສູ່ຮູບການອື່ນ ຫຼື ປະຕິບັດຕາມກົດໝາຍວ່າດ້ວຍການຟື້ນຟູ ແລະ ລົ້ມລະລາຍຂອງວິສາຫະກິດ.

❖ **ສຳລັບ ວິສາຫະກິດປະສົມ:**

**ປະເພດ 1:** ວິສາຫະກິດປະສົມ ແລະ ຜູ້ບໍລິຫານ ຝ່າຍລັດ ຈະໄດ້ຮັບການຍ້ອງຍໍ; ສຳລັບ ການຈ່າຍເງິນບຳເນັດປະຈຳປີ ແມ່ນໃຫ້ປະຕິບັດຕາມມະຕິຕົກລົງຂອງກອງປະຊຸມຜູ້ຖືຮຸ້ນ.

**ປະເພດ 2:** ກະຊວງການເງິນ ຈະກຳນົດທິດທາງການປັບປຸງແກ້ໄຂ ເພື່ອມອບໃຫ້ຜູ້ບໍລິຫານຝ່າຍລັດ ນຳໄປຈັດຕັ້ງປະຕິບັດ ແລະ ອາດຈະມີການປັບປຸງຜູ້ບໍລິຫານຝ່າຍລັດຈຳນວນໜຶ່ງ ຕາມຄວາມເໝາະສົມ; ສຳລັບ ການຈ່າຍເງິນບຳເນັດປະຈຳປີ ແມ່ນໃຫ້ປະຕິບັດຕາມມະຕິຕົກລົງຂອງກອງປະຊຸມຜູ້ຖືຮຸ້ນ.

**ປະເພດ 3:** ກະຊວງການເງິນ ຈະປັບປຸງຜູ້ບໍລິຫານຝ່າຍລັດ ພ້ອມທັງ ຄົ້ນຄວ້າກຳນົດທິດທາງປັບປຸງແກ້ໄຂ ຫຼື ຄົ້ນຄວ້າມາດຕະການອື່ນທີ່ເໝາະສົມກັບສະພາບຂອງທຸລະກິດ.

**ປະເພດ 4:** ກະຊວງການເງິນ ຈະຄົ້ນຄວ້ານຳສະເໜີລັດຖະບານເພື່ອພິຈາລະນາ ກ່ຽວກັບ ຄວາມຈຳເປັນໃນການສືບຕໍ່ຖືຮຸ້ນຂອງລັດຖະບານ.

**ມາດຕາ 6 ມາດຕະການ**

ວິສາຫະກິດປະສົມ ທີ່ບໍ່ປະຕິບັດຕາມຂໍ້ 1, 2 ແລະ ຂໍ້ 3 ຂອງມາດຕາ 4 ຫຼື ບໍ່ໃຫ້ການຮ່ວມມືໃນການປະເມີນຜົນຕາມຂໍ້ຕົກລົງສະບັບນີ້ ແມ່ນ ກະຊວງການເງິນ ຈະຄົ້ນຄວ້າການປັບປຸງຜູ້ບໍລິຫານຝ່າຍລັດ ຫຼື ມາດຕະການອື່ນຕາມຄວາມເໝາະສົມ; ສຳລັບ ລັດວິສາຫະກິດ ທີ່ບໍ່ປະຕິບັດຕາມ ແມ່ນ ກະຊວງການເງິນ ຈະປັບປຸງ-ສັບຊ້ອນຜູ້ບໍລິຫານ ຕາມຄວາມເໝາະສົມ.

ກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ການປະກັນໄພ ຕ້ອງລົງຕິດຕາມກວດກາຫົວໜ່ວຍວິສາຫະກິດລັດລົງທຶນ ທີ່ໄດ້ຖືກປະເມີນຜົນ ແລະ ຈັດຢູ່ໃນປະເພດ 2 ຫຼື ປະເພດ 3 ເພື່ອຊຸກຍູ້ຊອກຫາວິທີແກ້ໄຂຊ່ວຍໃຫ້ມີປະສິດທິຜົນດີຂຶ້ນ, ໃນກໍລະນີພົບເຫັນບັນຫາທີ່ເປັນການລະເມີດລະບຽບກົດໝາຍ ແມ່ນ ໃຫ້ແຈ້ງເຊີນອົງການກວດສອບແຫ່ງລັດ ຫຼື ອົງການກວດກາແຫ່ງລັດ ເຂົ້າຮ່ວມເປັນຄະນະເພື່ອເຮັດວຽກຮ່ວມກັນ ແລະ ລາຍງານຂໍ້ມູນໃຫ້ແກ່ສອງອົງການດັ່ງກ່າວ.

**ມາດຕາ 7 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ການປະກັນໄພ ເປັນເຈົ້າການຄົ້ນຄວ້າສ້າງຄູ່ມືການປະເມີນຜົນການດຳເນີນທຸລະກິດ ຂອງ ວິສາຫະກິດລັດລົງທຶນ ເປັນອັນສະເພາະ ໂດຍໃຫ້ກຳນົດລະອຽດ ແລະ ອະທິບາຍ ກ່ຽວກັບ ການຄິດໄລ່ບັນດາຕົວຊີ້ວັດຕ່າງໆ, ພ້ອມດ້ວຍວິທີການໃຫ້ຄະແນນແຕ່ລະຕົວຊີ້ວັດ ແລະ ການສະຫຼຸບສັງລວມເພື່ອຈັດປະເພດ.

ມອບໃຫ້ ກົມຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ການປະກັນໄພ, ບັນດາວິສາຫະກິດລັດລົງທຶນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 8 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ກະຊວງການເງິນ ລັດຖະມົນຕີ

ສັນຕິພາບ ພົມວິຫານ